# ຫຼັກປະພຶດປະຕິບັດສຳລັບຜູ້ສະໜອງສິນຄ້າຂອງ Mizuno

ພວກເຮົາຢູ່ບໍລິສັດ Mizuno ສະໜັບສະໜູນວິທີປະຕິບັດດ້ານການຈ້າງງານທີ່ຍຸຕິທຳໃນຄວາມສຳພັນກັບພະນັກງານຂອງພວກເຮົາ ແລະ ພະຍາຍາມສະໜອງສະພາບແວດລ້ອມເຮັດວຽກທີ່ປອດໄພ, ໂດຍມີຄວາມມຸ່ງໝັ້ນຕໍ່ກັບສິດທິມະນຸດຂັ້ນພື້ນຖານຢູ່ບ່ອນເຮັດວຽກ. ພວກເຮົາຍຶດໝັ້ນ ແລະ ສະໜັບສະໜູນທຸກຖະແຫຼງການສາກົນທີ່ກ່ຽວຂ້ອງກັບແຮງງານ ລວມທັງຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ໂດຍປະຕິບັດຕາມທຸກກົດໝາຍແຮງງານທີ່ນຳໃຊ້ໃນບັນດາປະເທດທີ່ພວກເຮົາເຮັດທຸລະກິດ ລວມທັງກົດໝາຍທ້ອງຖິ່ນທີ່ກຳນົດຊົ່ວໂມງເຮັດວຽກ, ຄ່າຕອບແທນ, ເສລີພາບໃນການເຂົ້າຮ່ວມສະມາຄົມ ແລະ ການເຈລະຈາຕໍ່ລອງແບບລວມກຸ່ມ, ເງື່ອນໄຂການເຮັດວຽກ ແລະ ວິທີປະຕິບັດອື່ນຢູ່ບ່ອນເຮັດວຽກ. ພວກເຮົາພະຍາຍາມສ້າງສະພາບແວດລ້ອມເຮັດວຽກບ່ອນທີ່ບຸກຄົນໄດ້ຮັບການປະຕິບັດຕໍ່ດ້ວຍກຽດສັກສີ, ຄວາມຍຸຕິທຳ ແລະ ຄວາມເຄົາລົບ. ນອກນັ້ນ ພວກເຮົາຍັງຮັບຮູ້, ໃຫ້ຄວາມສຳຄັນ, ເຄົາລົບ ແລະ ສົ່ງເສີມຄວາມແຕກຕ່າງດ້ານວັດທະນະທຳ ແລະ ຄວາມຫຼາກຫຼາຍດ້ານພື້ນຖານ ແລະ ຄວາມຄິດຂອງພະນັກງານຂອງພວກເຮົາ.

ອີງຕາມນະໂຍບາຍນີ້, ພວກເຮົາໄດ້ສ້າງຫຼັກປະພຶດປະຕິບັດສຳລັບຜູ້ສະໜອງສິນຄ້າຂອງ Mizuno ຕາມທີ່ລະບຸໄວ້ຂ້າງລຸ່ມ. ພວກເຮົາຄາດຫວັງໃຫ້ຜູ້ສະໜອງສິນຄ້າທັງໝົດທີ່ກ່ຽວຂ້ອງໃນການຜະລິດສິນຄ້າຂອງ Mizuno ປະຕິບັດຕາມຫຼັກປະພຶດປະຕິບັດສຳລັບຜູ້ສະໜອງສິນຄ້າຂອງ Mizuno.
ພວກເຮົາຍັງຄາດຫວັງໃຫ້ຜູ້ສະໜອງສິນຄ້າຂອງພວກເຮົາຮັບປະກັນວ່າຂໍ້ກຳນົດຕ່າງໆຂອງຫຼັກປະພຶດປະຕິບັດນີ້ຕ້ອງຖືກສື່ສານແຈ້ງບອກຕໍ່ກັບພະນັກງານຂອງເຂົາເຈົ້າ. ເພື່ອບັນລຸໄດ້ສິ່ງນີ້, ຫຼັກປະພຶດປະຕິບັດນີ້ຄວນຖືກແປເປັນພາສາທ້ອງຖິ່ນ ແລະ ຕິດປະກາດໃນແບບທີ່ເຫັນໄດ້ງ່າຍ. ນອກນັ້ນ ພວກເຮົາຍັງຄາດຫວັງໃຫ້ຜູ້ສະໜອງສິນຄ້າຂອງພວກເຮົານຳໃຊ້ລະບົບດຳເນີນງານທີ່ເໝາະສົມທີ່ເຮັດໃຫ້ສາມາດຕິດຕາມການຈັດຕັ້ງປະຕິບັດຫຼັກປະພຶດປະຕິບັດນີ້ໄດ້.

## 1. ການຄຸ້ມຄອງຂອງບໍລິສັດ

### 1) ການປະຕິບັດຕາມກົດໝາຍ ແລະ ມາດຕະຖານທີ່ນຳໃຊ້

**ການປະຕິບັດຕາມກົດໝາຍ ແລະ ມາດຕະຖານທີ່ນຳໃຊ້**

ຜູ້ສະໜອງສິນຄ້າຈະຕ້ອງປະຕິບັດທຸກກົດໝາຍ, ກົດລະບຽບ, ລະບຽບການ ແລະ ຂໍ້ກຳນົດຕ່າງໆທີ່ນຳໃຊ້ ແລະ ສ້າງລະບົບທີ່ຮັບປະກັນການປະຕິບັດຕາມກົດໝາຍ ແລະ ມາດຕະຖານທີ່ນຳໃຊ້ຂອງຕົນ.

**ມາດຕະຖານແຮງງານສາກົນຂອງອົງການແຮງງານສາກົນ (ILO)**

ພວກເຮົາຄາດຫວັງໃຫ້ຜູ້ສະໜອງສິນຄ້າຂອງພວກເຮົາເຄົາລົບຫຼັກການຂອງເອກະສານສາກົນຕໍ່ໄປນີ້:
ສົນທິສັນຍາຂອງອົງການ ILO ສະບັບທີ 29 (ແຮງງານຖືກບັງຄັບ ຫຼື ພາກບັງຄັບ)
ສົນທິສັນຍາຂອງອົງການ ILO ສະບັບທີ 81 (ການກວດກາແຮງງານໃນຂະແໜງອຸດສາຫະກຳ ແລະ ການຄ້າ)
ສົນທິສັນຍາຂອງອົງການ ILO ສະບັບທີ 87 (ເສລີພາບໃນການເຂົ້າຮ່ວມສະມາຄົມ ແລະ ການປົກປ້ອງສິດໃນການລວມກຸ່ມ)
ສົນທິສັນຍາຂອງອົງການ ILO ສະບັບທີ 98 (ການນຳໃຊ້ຫຼັກການຕ່າງໆຂອງສິດທິໃນການລວມກຸ່ມ ແລະ ເຈລະຈາຕໍ່ລອງແບບລວມກຸ່ມ)
ສົນທິສັນຍາຂອງອົງການ ILO ສະບັບທີ 122 (ນະໂຍບາຍວ່າດ້ວຍການຈ້າງງານ)
ສົນທິສັນຍາຂອງອົງການ ILO ສະບັບທີ 131 (ການກຳນົດຄ່າຈ້າງຕໍ່າສຸດ ໂດຍການອ້າງອີງພິເສດເຖິງປະເທດກຳລັງພັດທະນາ)
ສົນທິສັນຍາຂອງອົງການ ILO ສະບັບທີ 138 (ອາຍຸຕໍ່າສຸດສຳລັບການຈ້າງງານ)
ສົນທິສັນຍາຂອງອົງການ ILO ສະບັບທີ 159 (ການຟື້ນຟູທາງວິຊາຊີບ ແລະ ການຈ້າງງານ)
ສົນທິສັນຍາຂອງອົງການ ILO ສະບັບທີ 182 (ຂໍ້ຫ້າມ ແລະ ການດຳເນີນການທັນທີສຳລັບການກຳຈັດທຸກຮູບແບບທີ່ຮ້າຍແຮງທີ່ສຸດຂອງແຮງງານເດັກ)

## 2. ສິດທິມະນຸດ

### 1) ການເຄົາລົບສິດທິພື້ນຖານຢູ່ບ່ອນເຮັດວຽກ

**ການຫ້າມໃຊ້ແຮງງານເດັກ**

ຜູ້ສະໜອງສິນຄ້າຈະຕ້ອງບໍ່ວ່າຈ້າງເດັກນ້ອຍອາຍຸຕໍ່າກວ່າ 15 ປີ ຫຼື ຕໍ່າກວ່າອາຍຸສຳລັບການຮຽນຈົບການສຶກສາພາກບັງຄັບໃນປະເທດຂອງການຜະລິດ.

**ການຫ້າມໃຊ້ແຮງງານຖືກບັງຄັບ**

ຜູ້ສະໜອງສິນຄ້າຈະຕ້ອງບໍ່ໃຊ້ແຮງງານຖືກບັງຄັບ ບໍ່ວ່າໃນຮູບແບບຂອງແຮງງານນັກໂທດ, ແຮງງານມີສັນຍາຜູກມັດ, ແຮງງານຜູກມັດ ຫຼື ຮູບແບບອື່ນໆ ຫຼື ໂດຍວິທີການໃຊ້ການຂົ່ມຂູ່, ການບັງຄັບ, ການລົງໂທດທາງຮ່າງກາຍ, ການຮ້າຍດ່າທາງຄຳເວົ້າ ຫຼື ອື່ນໆ.

**ເສລີພາບໃນການເຂົ້າຮ່ວມສະມາຄົມ ແລະ ການເຈລະຈາຕໍ່ລອງແບບລວມກຸ່ມ**

ຜູ້ສະໜອງສິນຄ້າຈະຕ້ອງຮັບຮູ້ ແລະ ເຄົາລົບສິດທິຂອງພະນັກງານໃນການລວມກຸ່ມ ແລະ ເຂົ້າຮ່ວມສະມາຄົມຕາມການເລືອກຂອງເຂົາເຈົ້າເອງ ແລະ ເຈລະຈາຕໍ່ລອງແບບລວມກຸ່ມ. ຜູ້ສະໜອງສິນຄ້າຈະບໍ່ຂັດຂວາງວິທີການທາງເລືອກ ແລະ ຖືກກົດໝາຍສຳລັບການເຂົ້າຮ່ວມສະມາຄົມເອກະລາດ ແລະ ບໍ່ເສຍຄ່າ ຫຼື ການເຈລະຈາຕໍ່ລອງແບບລວມກຸ່ມບ່ອນທີ່ກົດໝາຍຈຳກັດສິດທິຕໍ່ກັບເສລີພາບໃນການເຂົ້າຮ່ວມສະມາຄົມ ແລະ ການເຈລະຈາຕໍ່ລອງແບບລມກຸ່ມເປັນການສະເພາະ. ນອກນັ້ນ, ຜູ້ສະໜອງສິນຄ້າຈະຕ້ອງຈັດຕັ້ງປະຕິບັດລະບົບຕ່າງໆເພື່ອຮັບປະກັນການສື່ສານແຈ້ງບອກຢ່າງມີປະສິດທິຜົນກັບພະນັກງານ.

**ການຫ້າມການເລືອກປະຕິບັດ**

ຜູ້ສະໜອງສິນຄ້າຈະຕ້ອງວ່າຈ້າງ ແລະ ຕັດສິນພະນັກງານ ແລະ ຜູ້ຮັບເໝົາຍ່ອຍຂອງຕົນອີງຕາມຄວາມສາມາດໃນການເຮັດວຽກຂອງເຂົາເຈົ້າ ແລະ ຈະບໍ່ພົວພັນ ຫຼື ສະໜັບສະໜູນການເລືອກປະຕິບັດທີ່ຜິດກົດໝາຍທີ່ອີງໃສ່ເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ສາສະໜາ, ອາຍຸ, ຄວາມພິການ, ສະຖານະການແຕ່ງງານ, ສະຖານະພໍ່ແມ່, ການເຂົ້າຮ່ວມສະມາຄົມ, ການເປັນສະມາຊິກ, ລົດສະນິຍົມທາງເພດ ຫຼື ຄວາມເຫັນທາງການເມືອງ. ຜູ້ສະໜອງສິນຄ້າຈະຕ້ອງບໍ່ພົວພັນໃນການຄຸກຄາມທາງເພດ, ທາງອຳນາດ ຫຼື ຮູບແບບອື່ນຂອງການຄຸກຄາມ.

## 3. ວິທີປະຕິບັດດ້ານແຮງງານ

### 1) ການຈ້າງງານ ແລະ ຄວາມສຳພັນໃນການຈ້າງງານ

**ການສ້າງການຈ້າງງານທີ່ໝັ້ນຄົງ**

ຜູ້ສະໜອງສິນຄ້າຈະຕ້ອງຮັບປະກັນໃຫ້ມີການຈ້າງງານທີ່ໝັ້ນຄົງ. ຜູ້ສະໜອງສິນຄ້າຈະຕ້ອງບໍ່ຢຸດເຊົາສັນຍາຈ້າງງານແບບຝ່າຍດຽວເນື່ອງຈາກເຫດຜົນທາງທຸລະກິດ ຫຼື ວ່າຈ້າງພະນັກງານຕາມອຳເພີໃຈ (ໄລຍະສັ້ນ, ສຳລັບການຈ້າງງານຕາມລະດູການ ແລະ ອື່ນໆ).

**ການຫ້າມການລົງໂທດ ຫຼື ການປະຕິບັດວິໄນແບບບໍ່ມີເຫດຜົນ**

ຜູ້ສະໜອງສິນຄ້າຈະຕ້ອງບໍ່ພົວພັນໃນການລົງໂທດ ຫຼື ການປະຕິບັດວິໄນແບບບໍ່ມີເຫດຜົນທີ່ອີງໃສ່ເຊື້ອຊາດ, ຊາດກຳເນີດ, ສີຜິວ, ເພດ, ສາສະໜາ, ອາຍຸ, ຄວາມພິການ, ສະຖານະການແຕ່ງງານ, ສະຖານະພໍ່ແມ່, ການເຂົ້າຮ່ວມສະມາຄົມ, ການເປັນສະມາຊິກ, ລົດສະນິຍົມທາງເພດ ຫຼື ຄວາມເຫັນທາງການເມືອງ. ຜູ້ສະໜອງສິນຄ້າຈະຕ້ອງບໍ່ດຳເນີນການປະຕິວິໄນໂດຍບໍ່ມີການກຳນົດລະບຽບວິໄນທີ່ເໝາະສົມ ຫຼື ໂດຍບໍ່ມີການສືບສວນ ແລະ ພິຈາລະນາຂໍ້ເທັດຈິງຢ່າງຄົບຖ້ວນ.

### 2) ເງື່ອນໄຂການເຮັດວຽກ ແລະ ການປົກປ້ອງທາງສັງຄົມ

**ການໃຫ້ຄ່າຈ້າງ ແລະ ຜົນປະໂຫຍດທີ່ເໝາະສົມ**

ຜູ້ສະໜອງສິນຄ້າຈະຕ້ອງຈ່າຍຄ່າຈ້າງທີ່ພຽງພໍເພື່ອຕອບສະໜອງຄວາມຈຳເປັນພື້ນຖານ, ການທ້ອນເງິນທີ່ສົມເຫດສົມຜົນ ແລະ ລາຍຈ່າຍຕາມອັດທະຍາໄສຂອງພະນັກງານ, ຫຼື ຄ່າຈ້າງທີ່ເທົ່າກັບ ຫຼື ລື່ນຄ່າຈ້າງຕໍ່າສຸດທີ່ກຳນົດໄວ້ໂດຍກົດໝາຍ ຫຼື ຄ່າຈ້າງທີ່ໃຊ້ກັນທົ່ວໄປໃນຂະແໜງອຸດສາຫະກຳ. ຈະຕ້ອງໃຫ້ຜົນປະໂຫຍດທີ່ເທົ່າກັບ ຫຼື ລື່ນມາດຕະຖານຕໍ່າສຸດຕາມກົດໝາຍກຳນົດ. ນອກນັ້ນ, ຜູ້ສະໜອງສິນຄ້າຈະຕ້ອງຈ່າຍຄ່າຈ້າງໂດຍກົງໃຫ້ແກ່ພະນັກງານຂອງຕົນເປັນເງິນສົດ ຫຼື ເງິນເຊັກ ຫຼື ຈຳນວນທຽບເທົ່າກັນ ແລະ ມີລະບົບເພື່ອໃຫ້ຂໍ້ມູນກ່ຽວຂ້ອງກັບຄ່າຈ້າງ ເຊັ່ນວ່າ ກ່ຽວກັບການຕັດເງິນຈາກເງິນຄ່າຈ້າງ.

**ການຄຸ້ມຄອງຊົ່ວໂມງເຮັດວຽກທີ່ເໝາະສົມ**

ຜູ້ສະໜອງສິນຄ້າຈະຕ້ອງປະຕິບັດຕາມຂໍ້ກຳນົດຂອງກົດໝາຍທ້ອງຖິ່ນສຳລັບຊົ່ວໂມງເຮັດວຽກ ແລະ ຈ່າຍຄ່າຕອບແທນແກ່ພະນັກງານສຳລັບຊົ່ວໂມງເຮັດວຽກລ່ວງເວລາຕາມອັດຕາທີ່ກົດໝາຍກຳນົດໄວ້.

### 3) ສຸຂະພາບ ແລະ ຄວາມປອດໄພຢູ່ບ່ອນເຮັດວຽກ

**ການສ້າງສະພາບແວດລ້ອມບ່ອນເຮັດວຽກທີ່ປອດໄພ ແລະ ດີຕໍ່ສຸຂະພາບ**

ຜູ້ສະໜອງສິນຄ້າຈະຕ້ອງໃຫ້ສະພາບແວດລ້ອມທີ່ປອດໄພ ແລະ ດີຕໍ່ສຸຂະພາບ ບໍ່ພຽງແຕ່ຢູ່ໃນບ່ອນເຮັດວຽກເທົ່ານັ້ນແຕ່ຍັງຢູ່ໃນທຸກສະຖານທີ່ທີ່ພະນັກງານນຳໃຊ້ ເຊັ່ນວ່າ ຫ້ອງນ້ຳ, ບ່ອນຂາຍອາຫານ ແລະ ຫໍພັກ, ໂດຍການດຳເນີນຂັ້ນຕອນທີ່ມີປະສິດທິຜົນເພື່ອປ້ອງກັນອຸປະຕິເຫດ ແລະ ພະຍາດທີ່ກ່ຽວຂ້ອງກັບການເຮັດວຽກທີ່ອາດຈະເກີດຂຶ້ນ. ນອກນັ້ນ ຜູ້ສະໜອງສິນຄ້າຍັງຈະຕ້ອງກະກຽມສຳລັບໄພພິບັດ ແລະ ສະພາບສຸກເສີນນຳອີກ.

## 4. ວິທີປະຕິບັດດ້ານສິ່ງແວດລ້ອມ

### 1) ການປ້ອງກັນມົນລະພິດ

**ການຄວບຄຸມການປ່ອຍສານອັນຕະລາຍ ແລະ ການຫຼຸດຜ່ອນສິ່ງເສດເຫຼືອ**

ຜູ້ສະໜອງສິນຄ້າຈະຕ້ອງຄວບຄຸມ ແລະ ຫຼຸດຜ່ອນການປ່ອຍສານພິດ ແລະ ສານອັນຕະລາຍທີ່ເກີດຈາກການດຳເນີນທຸລະກິດຂອງຕົນ (ການຜະລິດ ແລະ R&D) ເຊິ່ງກໍ່ໃຫ້ເກີດມົນລະພິດທາງອາກາດ, ນ້ຳ ແລະ ດິນ ແລະ ປະກອບສ່ວນຕໍ່ກັບການເກີດມົນລະພິດຕໍ່ສະພາບແວດລ້ອມການດຳເນີນຊີວິດຂອງຜູ້ຄົນທີ່ອາໄສຢູ່ໃກ້ໂຮງງານ ລວມທັງສຽງດັງ, ກິ່ນທີ່ບໍ່ເພິ່ງປະສົງ, ມົນລະພິດທາງທິວທັດ, ການສັ່ນສະເທືອນ. ຜູ້ສະໜອງສິນຄ້າຈະຕ້ອງຫຼຸດຜ່ອນສິ່ງເສດເຫຼືອຂອງແຂງ ຫຼື ຂອງແຫຼວທີ່ເກີດຂຶ້ນໃນລະຫວ່າງການຜະລິດ. ນອກນັ້ນ ຜູ້ສະໜອງສິນຄ້າຍັງຈະຕ້ອງດຳເນີນທຸລະກິດໂດຍປະຕິບັດຕາມກົດໝາຍ ແລະ ກົດລະບຽບດ້ານສິ່ງແວດລ້ອມ ແລະ ກົດໝາຍ ແລະ ກົດລະບຽບອື່ນທີ່ກ່ຽວຂ້ອງ.

### 2) ການໃຊ້ຊັບພະຍາກອນໃນແບບທີ່ຍືນຍົງ

**ການຊົມໃຊ້ຊັບພະຍາກອນແບບຍືນຍົງ**

ຜູ້ສະໜອງສິນຄ້າຈະຕ້ອງບໍ່ໃຊ້ວັດຖຸດິບຈາກໄມ້, ນ້ຳ ແລະ ຊັບພະຍາກອນທຳມະຊາດອື່ນຫຼາຍເກີນໄປສຳລັບການຜະລິດ, ແຕ່ໃຊ້ຊັບພະຍາກອນທຳມະຊາດຕາມອັດຕາທີ່ໜ້ອຍກວ່າ ຫຼື ເທົ່າກັບອັດຕາການທົດແທນຕາມທຳມະຊາດ. ຜູ້ສະໜອງສິນຄ້າຈະຕ້ອງບໍ່ໃຊ້ຊັບພະຍາກອນພະລັງງານຫຼາຍເກີນໄປ (ໄຟຟ້າ, ນ້ຳມັນເຊື້ອໄຟ ແລະ ອື່ນໆ) ແລະ ຈະສົ່ງເສີມການໃຊ້ຊັບພະຍາກອນແບບຍືນຍົງໂດຍການເພີ່ມທະວີປະສິດທິພາບການໃຊ້ພະລັງງານ ແລະ ນຳໃຊ້ຊັບພະຍາກອນພະລັງງານທາງເລືອກ.

### 3) ການຊົມໃຊ້ໃນແບບທີ່ຍືນຍົງ

**ການສະໜອງຜະລິດຕະພັນມີມີຜົນກະທົບດ້ານສິ່ງແວດລ້ອມຕໍ່າ**

ໃນໄລຍະອອກແບບການຜະລິດ, ຜູ້ສະໜອງສິນຄ້າຈະຕ້ອງພິຈາລະນາເຖິງການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມຈາກການໃຊ້ຜະລິດຕະພັນ, ໂດຍການຈຳກັດການປ່ອຍອາຍຄວັນ ແລະ ການປ່ອຍສານພິດ ແລະ ສານອັດຕະລາຍທີ່ກໍ່ໃຫ້ເກີດມົນລະພິດທາງອາກາດ ແລະ ການປົນເປື້ອນທາງນ້ຳໃຫ້ມີໜ້ອຍສຸດ.

## 5. ວິທີປະຕິບັດທາງທຸລະກິດທີ່ຍຸຕິທຳ

### 1) ການຕ້ານການໃຫ້ ແລະ ຮັບສິນບົນ

**ການຫ້າມການໃຫ້ຫຼືຮັບສິນບົນ ແລະ ທຸລະກຳທີ່ຜິດກົດໝາຍ**

ຜູ້ສະໜອງສິນຄ້າຈະຕ້ອງບໍ່ພົວພັນໃນການປະພຶດທີ່ຜິດກົດໝາຍ ຫຼື ບໍ່ເປັນມືອາຊີບ ເຊັ່ນວ່າ ການສະເໜີໃຫ້ ແລະ ການຮັບເອົາເງິນ, ຂອງຂວັນ, ການບັນເທີງ ແລະ ການບໍລິການ ໂດຍຄາດຫວັງໄດ້ຮັບສິ່ງຕອບແທນຄືນໃນທຸລະກິດ. ການປະພຶດດັ່ງກ່າວລວມມີການສະເໜີໃຫ້ສິນບົນແກ່ເຈົ້າໜ້າທີ່ລັດໂດຍຄາດຫວັງໄດ້ຮັບການປະຕິບັດທີ່ເອື້ອອຳນວຍໃຫ້ແກ່ຕົນໃນການປະມູນແຂ່ງຂັນ ແລະ ການສະເໜີໃຫ້ ຫຼື ຮັບເອົາການບັນເທີງທີ່ຫຼາຍເກີນຄວນເພື່ອໄດ້ຮັບໂອກາດໃນການສັ່ງຊື້/ຮັບເອົາຄຳສັ່ງຊື້ໃດໜຶ່ງ. ນອກນັ້ນ, ຜູ້ສະໜອງສິນຄ້າຈະຕ້ອງບໍ່ໃຊ້ປະໂຫຍດຈາກການຢູ່ໃນສະຖານະທີ່ເຂັ້ມແຂງເພື່ອຜົນປະໂຫຍດຂອງຕົນ ລວມທັງການສະເໜີເງື່ອນໄຂການເຮັດທຸລະກິດພຽງຝ່າຍດຽວໃຫ້ແກ່ຜູ້ຮັບເໝົາຍ່ອຍ ຫຼື ທຸລະກິດທີ່ຮ່ວມລົງນາມ, ດຳເນີນການສໍ້ໂກງຕໍ່ກັບຮຸ້ນສ່ວນທຸລະກິດ ຫຼື ພົວພັນໃນການຂັດແຍ່ງຜົນປະໂຫຍດຕ່າງໆ.

### 2) ການແຂ່ງຂັນທີ່ຍຸຕິທຳ

**ການແຂ່ງຂັນທີ່ຍຸຕິທຳ**

ຜູ້ສະໜອງສິນຄ້າຈະຕ້ອງບໍ່ພົວພັນໃນການແຂ່ງຂັນ ຫຼື ການດຳເນີນທຸລະກິດທີ່ບໍ່ຍຸຕິທຳ. ຫ້າມບໍ່ໃຫ້ຜູ້ສະໜອງສິນຄ້າສວຍໃຊ້ສະຖານະທີ່ເໜືອກວ່າຂອງຕົນເພື່ອແຊກແຊງລົບກວນການແຂ່ງຂັນໃນຕະຫຼາດເສລີ ເຊັ່ນວ່າ ການກຳນົດລາຄາຜູກຂາດ ແລະ ຫ້າມສົມຮູ້ຮ່ວມຄິດກັບບໍລິສັດອື່ນເພື່ອໃຫ້ໄດ້ມາຄວາມເໜືອກວ່າທາງຕະຫຼາດຂອງຕົນ.

### 3) ການເຄົາລົບສິດທິດ້ານຊັບສິນ

**ການປົກປ້ອງສິດທິດ້ານຊັບສິນທາງປັນຍາ**

ຜູ້ສະໜອງສິນຄ້າຈະຕ້ອງເຄົາລົບລິຂະສິດ, ສິດທິບັດ ແລະ ສິດທິດ້ານຊັບສິນທາງປັນຍາອື່ນ ເຊິ່ງທັງໝົດແມ່ນສິດທິ ແລະ ສິດຜົນປະໂຫຍດທີ່ໄດ້ມາຜ່ານການເຄື່ອນໄຫວສ້າງຊັບສິນທາງປັນຍາ.

## 6. ການມີສ່ວນຮ່ວມ ແລະ ການພັດທະນາຊຸມຊົນ

### 1) ການມີສ່ວນຮ່ວມໃນຊຸມຊົນ

**ກິດຈະກຳທີ່ປະກອບສ່ວນພັດທະນາຊຸມຊົນທ້ອງຖິ່ນ**

ຜູ້ສະໜອງສິນຄ້າຈະຕ້ອງມີສ່ວນຮ່ວມໃນກິດຈະກຳຕ່າງໆທີ່ຊ່ວຍເຮັດໃຫ້ສະພາບການໃນຊຸມຊົນທ້ອງຖິ່ນໝັ້ນຄົງ. ຜູ້ສະໜອງສິນຄ້າຍັງຈະຕ້ອງດຳເນີນກິດຈະກຳຕ່າງໆທີ່ປະກອບສ່ວນພັດທະນາຊຸມຊົນທ້ອງຖິ່ນ ເຊັ່ນວ່າ ຄວາມພະຍາຍາມແກ້ໄຂບັນຫາຕ່າງໆ (ການພັດທະນາ/ການປັບປຸງໂຄງລ່າງພື້ນຖານ, ການສົ່ງເສີມການສຶກສາ, ການປັບປຸງການບໍລິການສຸຂະພາບ ແລະ ການແພດ, ການສົ່ງເສີມເສດຖະກິດທ້ອງຖິ່ນ) ທີ່ຊຸມຊົນທ້ອງຖິ່ນນັ້ນພະເຊີນ.

ຂໍ້ກຳນົດຕໍ່າສຸດເຫຼົ່ານີ້ຈະກາຍເປັນສ່ວນໜຶ່ງຂອງທຸກຂໍ້ຕົກລົງທາງການຄ້າໃໝ່ ຫຼື ຕໍ່ອາຍຸໃໝ່ລະຫວ່າງບໍລິສັດ Mizuno ກັບຜູ້ສະໜອງ ສິນຄ້າໂດຍກົງຂອງຕົນ ໂດຍປະຕິບັດໄປເທື່ອລະກ້າວ.
ຜູ້ສະໜອງສິນຄ້າຕ້ອງສາມາດສະແດງໃຫ້ເຫັນການປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ຂອງຕົນອີງຕາມການຮ້ອງຂໍ ແລະ ເປັນທີ່ເພິ່ງພໍໃຈຂອງບໍລິສັດ Mizuno. ບໍລິສັດ Mizuno ຫຼື ຕົວແທນທີ່ໄດ້ຮັບມອບໝາຍຂອງຕົນ (ລວມທັງພາກສ່ວນທີສາມ) ມີສິດກວດສອບສະຖານທີ່ໃດໆກໍຕາມທີ່ກ່ຽວຂ້ອງກັບການເຮັດວຽກໃຫ້ບໍລິສັດ Mizuno ແລະ ຜູ້ສະໜອງສິນຄ້າໃດໆກໍຕາມທີ່ຕອບສະໜອງບໍ່ໄດ້ການປະຕິບັດຕາມຂໍ້ກຳນົດຂອງບໍລິສັດ Mizuno ຈະຖືກຢຸດເຊົາບາງສ່ວນຂອງຂໍ້ຕົກລົງທຸລະກິດຂອງຕົນກັບບໍລິສັດ Mizuno.

ເດືອນກັນຍາ 2017, ບໍລິສັດ Mizuno